ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 109 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 13/07/2026

ມະຕິ
ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໄໝວິສາມັນ ຄັ້ງທີ III, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍສະພາບໍລິຫານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ສະບັບປັບປຸງ, ສະບັບເລກທີ 14/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝວິສາມັນ ຄັ້ງທີ III ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 10:00 ໂມງ, ຂອງວັນທີ 13 ກໍລະກົດ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ນາງ ພອນສະໄຫມ ສຸຂະຜົນ, ຮອງປະທານສະພາບໍລິຫານ (ທີ່ຖືກມອບສິດຈາກ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ) ໂດຍມີສະມາຊິກສະພາບໍລິຫານ ຈຳນວນ 07 ທ່ານ ເຂົ້າຮ່ວມ. ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງ, ບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ໄດ້ຕົກລົງເປັນເອກະພາບຕໍ່ແຕ່ລະວາລະຂອງກອງປະຊຸມ ດັ່ງນີ້:

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:

ມາດຕາ 1 ຮັບຮອງເອົາບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເພື່ອໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;

ມາດຕາ 2 ຮັບຮອງ ການປັບປຸງ ສະມາຊິກສະພາບໍລິຫານ ຊຸດໃໝ່ ຕາມການສະເໜີຂອງຄະນະກຳມະການຄັດເລືອກ ເພື່ອສະເໜີຕໍ່ກອງປະຊຸມ ຜູ້ຖືຮຸ້ນ ຮັບຮອງ, ເຊິ່ງປະກອບມີ:

1) ທ່ານ ສຸນທອນ ຈັນທະວົງ	ປະທານ ສະພາບໍລິຫານ;
2) ທ່ານ ຄຳສິງ ສອນສິນນະວົງ	ຮອງປະທານສະພາບໍລິຫານ;
3) ທ່ານ ຈັນທະພອນ ຈັນທະວົງ	ສະມາຊິກ ສະພາບໍລິຫານ;
4) ທ່ານ ນາງ ຄອນສະຫວັນ ວິຊາເທບ	ສະມາຊິກ ສະພາບໍລິຫານ;
5) ທ່ານ ບຸນຊຸ່ມ ສີສະຫວັດ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
6) ທ່ານ ປ.ອ ຈອມຄຳ ບຸບຜາລີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ);
7) ທ່ານ ສຸກສະຫວັນ ມະນີວັນ	ສະມາຊິກ ອິດສະຫຼະ (ສະມາຊິກເດີມ).

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

ມາດຕາ 3 ຮັບຮອງ ການສິ້ນສຸດໜ້າທີ່ ຂອງສະມາຊິກສະພາຜູ້ບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ ປະກອບມີ:

1) ທ່ານ ວິໄລ ສີພະພອນ, ຕຳແໜ່ງ ປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;
2) ທ່ານ ນາງ ພອນສະໄຫມ ສຸຂະພົນ, ຕຳແໜ່ງ ຮອງປະທານສະພາບໍລິຫານ ຮັບອຸດໜູນບຳເນັດ;
3) ທ່ານ ສາຄອນ ຍໍພັນໄຊ, ຕຳແໜ່ງ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ຄົບວາລະຕາມລະບຽບການ;
4) ທ່ານ ວິລັນເດດ ໄວຍະສິມສັກ, ຕຳແໜ່ງ ສະມາຊິກ ສະພາບໍລິຫານ ແລະ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
5) ທ່ານ ວິສຸດ ບົວສີສະອາດ, ຕຳແໜ່ງ ສະມາຊິກສະພາບໍລິຫານ ສັບຊ້ອນໄປຮັບໜ້າທີ່ໃໝ່;
6) ທ່ານ ຈັນຊະນະ ສີງຫາວົງ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ;
7) ທ່ານ ວິລະພົງ ພິຈິດ, ຕຳແໜ່ງ ຮອງຜູ້ອຳນວຍການ ໄດ້ຂໍລາອອກດ້ວຍຄວາມສະໝັກໃຈ.

ມາດຕາ 4 ຮັບຮອງ ການປັບປຸງ ຄະນະອຳນວຍການ ຊຸດໃໝ່ ຕາມການສະເໜີຂອງຄະນະກຳມະການຄັດເລືອກ, ເຊິ່ງ ປະກອບມີ:

1) ທ່ານ ນາງ ຄອນສະຫວັນ ວິຊາເທບ	ຜູ້ອຳນວຍການ;
2) ທ່ານ ນາງ ນິດຕາ ນາມມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
3) ທ່ານ ໄຊ ບູລິມມະວົງ	ຮອງຜູ້ອຳນວຍການ (ຄະນະເດີມ);
4) ທ່ານ ສັງມາ ສິດທຳມະວົງ	ຮອງຜູ້ອຳນວຍການ;
5) ທ່ານ ຫຼ້າສອນໄຊ ຈັນທະວົງ	ຮອງຜູ້ອຳນວຍການ.

ມາດຕາ 5 ຮັບຮອງເອົາ ການດັດແກ້ໃບທະບຽນວິສາຫະກິດ ແລະ ກົດລະບຽບພາຍໃນຂອງ ທຄຮ ຄື:

1) ມາດຕາ 9: ທຶນຈົດທະບຽນ
2) ມາດຕາ 11: ຮຸ້ນ
3) ມາດຕາ 14: ໂຄງປະກອບຂອງຜູ້ຖືຮຸ້ນ
4) ມາດຕາ 84: ຜົນສັກສິດ.

ມາດຕາ 6 ຮັບຮອງເອົາການປັບປຸງຄະນະກຳມະການຕ່າງໆຂອງສະພາບໍລິຫານ ຕາມການເຫັນດີຂອງ ສະພາບໍລິຫານ.

ມາດຕາ 7 ຮັບຮອງເອົາ ແຜນຈັດກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ I ທະນາຄານຮ່ວມພັດທະນາ ມະຫາຊົນ ປະຈຳປີ 2026 ດັ່ງນີ້:

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມ ວິສາມັນຜູ້ຖືຮຸ້ນ: ວັນທີ 14 ກໍລະກົດ 2026;
- ມື້ເປີດກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ I: ວັນສຸກ ທີ 17 ກໍລະກົດ 2026, ເວລາ: 14:00-16:00 ໂມງ;
- ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ທະນາຄານຮ່ວມພັດທະນາ ມະຫາຊົນ, ຫ້ອງປະຊຸມໃຫຍ່ ຊັ້ນ 6;
- ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ປະກອບມີ ດັ່ງນີ້:
  - **ວາລະທີ 1**: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2025;
  - **ວາລະທີ 2**: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງສະມາຊິກສະພາບໍລິຫານ ຊຸດໃໝ່;
  - **ວາລະທີ 3**: ພິຈາລະນາ ແລະ ຮັບຮອງເອົາ ການສິ້ນສຸດໜ້າທີ່ ຂອງສະມາຊິກສະພາຜູ້ບໍລິຫານ ແລະ ຄະນະອຳນວຍການ ຊຸດເກົ່າ;
  - **ວາລະທີ 4**: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງ ຄະນະອຳນວຍການ ຊຸດໃໝ່;

- **ວາລະທີ 5**: ພິຈາລະນາ ແລະ ຮັບຮອງເອົາ ການດັດແກ້ໃບທະບຽນວິສາຫະກິດ ແລະ ກິດລະບຽບພາຍໃນຂອງ ທຄຣ ຄື:
  1) ມາດຕາ 9: ທຶນຈົດທະບຽນ
  2) ມາດຕາ 11: ຮຸ້ນ
  3) ມາດຕາ 14: ໂຄງປະກອບຂອງຜູ້ຖືຮຸ້ນ
  4) ມາດຕາ 84: ຜົນສັກສິດ.

ມາດຕາ 8 ການຈັດຕັ້ງປະຕິບັດ

ມອບໃຫ້ພາກສ່ວນກ່ຽວຂ້ອງ ດຳເນີນການໃຫ້ສອດຄ່ອງຕາມລະບຽບການ.

ມາດຕາ 9 ມະຕິສະບັບນີ້ ແມ່ນຜົນການຮັບຮອງເບື້ອງຕົ້ນຂອງຄະນະສະພາບໍລິຫານ ເພື່ອສະເໜີເຂົ້າກອງປະຊຸມວິສາມັນຜູ້ຖືຮຸ້ນ ຮັບຮອງຕາມລະບຽບການກ່ຽວຂ້ອງໃນຂັ້ນຕໍ່ໄປ.

ປະທານກອງປະຊຸມ

ພອນສະໄໝ ສຸຂະຜົນ